Lt.Col.Pol.Phoumay LATHSAMY(Email: PSMgroo51974@gmail.com) 1

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງປ້ອງກັນຄວາມສະຫງົບ

ກົມຄຸ້ມຄອງສຳມະໂນຄົວ ແລະ ກໍ່ສ້າງຮາກຖານ

ເລກທີ.........../ ຄທຖ

ນະຄອນຫຼວງວຽງຈັນ, ວັນທີ..14..ສິງຫາ 2018

# ໜັງສືແຈ້ງຕອບ

**ຮຽນ:** ທ່ານ ຫົວໜ້າຫ້ອງການບໍລິການການລົງທຶນປະຕູດຽວ ກົມສົ່ງເສີມການລົງທຶນ.

**ເລື່ອງ:** ຄວາມຄືບໜ້າໃນການຈັດຕັ້ງປະຕິບັດຄຳສັ່ງເລກທີ 02/ນຍ ລົງວັນທີ 01 ກຸມພາ2018 ຂອງທ່ານນາຍົກລັດຖະມົນຕີວ່າດ້ວຍການປັບປຸງລະບຽບການ ແລະກົນໄກປະສານງານໃນການດຳເນີນທຸລະກິດຢູ່ສປປລາວ.

- ອີງຕາມ ຄຳສັ່ງຂອງທ່ານນາຍົກລັດຖະມົນຕີວ່າດ້ວຍການປັບປຸງບັນດາລະບຽບການ ແລະ ກົນໄກປະສານງານໃນການດຳເນີນທຸລະກິດຢູ່ ສປປ ລາວ, ເລກທີ 02/ນຍ, ລົງວັນທີ 01 ກຸມພາ 2018.
- ອີງຕາມ ໜັງສືສະເໜີຂອງຫົວໜ້າຫ້ອງການບໍລິການການລົງທຶນປະຕູດຽວ ສະບັບເລກທີ 242/ຫລບ.ລທ2, ລົງວັນທີ 02.08.2818 ເລື່ອງ:ລາຍງານຄວາມຄືບໜ້າໃນການຈັດຕັ້ງປະຕິບັດ **ຄຳສັ່ງເລກທີ 02/ນຍ, ລົງວັນທີ 01 ກຸມພາ 2018** ຂອງທ່ານນາຍົກລັດຖະມົນຕີ ວ່າດ້ວຍການປັບປຸງລະບຽບການ ແລະ ກົນໄກປະສານງານໃນການດຳເນີນທຸລະກິດ ຢູ່ ສປປ ລາວ ປະຈຳໄຕມາດ 2.

ກົມຄຸ້ມຄອງສຳມະໂນຄົວ ແລະ ກໍ່ສ້າງຮາກຖານ ຂໍຖືເປັນກຽດ ລາຍງານມາຍັງ ທ່ານ ຫົວໜ້າຫ້ອງການບໍລິການການລົງທຶນປະຕູດຽວ ກ່ຽວກັບຄວາມຄືບໜ້າໃນການຈັດຕັ້ງປະຕິບັດ **ຄຳສັ່ງເລກທີ 02/ນຍ, ລົງວັນທີ 01 ກຸມພາ 2018** ຂອງທ່ານນາຍົກລັດຖະມົນຕີ ວ່າດ້ວຍການປັບປຸງລະບຽບການ ແລະ ກົນໄກປະສານງານໃນການດຳເນີນທຸລະກິດ ຢູ່ ສປປ ລາວ ລາຍລະອຽດມີດັ່ງນີ້:

**1.** ການຜະລິດກາປະທັບ ວິສາຫະກິດ ຢູ່ກົມຄຸ້ມຄອງສຳມະໂນຄົວ ແລະ ກໍ່ສ້າງຮາກຖານ ໄດ້ຕັດຂັ້ນຕອນຂໍອອກໃບອະນຸມັດຄວັດກາປະທັບ ແລະ ຂັ້ນຕອນໄປແຈ້ງການຂຶ້ນທະບຽນຮູບແບບກາປະທັບ ຢູ່ ປກສ ນະຄອນຫຼວງວຽງຈັນ, ບັນດາກອງບັນຊາການ ປກສ ແຂວງ ບໍ່ໃຫ້ໄປແຈ້ງອີກ. ກົມອອກໃບນຳໃຊ້ ໄດ້ເລີຍ.

**2.** ກົມໄດ້ແຕ່ງຕັ້ງພະນັກງານວິຊາການ ລົງເຜີຍແຜ່ເຊື່ອມຊຶມຄຳສັ່ງດັ່ງກ່າວໃຫ້ບັນດາກອງບັນຊາການ ປກສ ແຂວງ ແລະ ປກສ ນະຄອນຫຼວງວຽງຈັນ ໃຫ້ຮັບຮູ້ ແລະ ກຽມພ້ອມຈັດຕັ້ງປະຕິບັດ.

**3.** ໄດ້ລົງສຳຫຼວດກວດກາສະຖານທີ່ບ່ອນຈະຕິດຕັ້ງເຄື່ອງຈັກຜະລິດຕາປະທັບວິສາຫະກິດ ເຫັນວ່າແຕ່ລະແຂວງແມ່ນມີຄວາມພ້ອມໃນການຜະລິດຢູ່ແຕ່ລະແຂວງສຳເລັດ.

**4.** ບັນດາກອງບັນຊາການ ປກສ ແຂວງໄດ້ຄົ້ນຄ້ວາກຳນົດບັນດາເປົ້າໝາຍບຸກຄະລາກອນທີ່ຈະເຂົ້າຮ່ວມໃນການຝຶກອົບຮົມວຽກງານຜະລິດຕາປະທັບທຸລະກິດ ເຊິ່ງເບື້ອງຕົ້ນໄດ້ກຳນົດເອົາແຂວງລະ 03 ສະຫາຍ.

**5.** ກົມຄຸ້ມຄອງສຳມະໂນຄົວ ແລະ ກໍ່ສ້າງຮາກຖານຈະໄດ້ແຕ່ງຕັ້ງພະນັກງານວິຊາການລົງຕິດຕັ້ງເຄື່ອງຈັກຜະລິດກາປະທັບວິສາຫະກິດ, ຝຶກອົບຮົມພາກທິດສະດີ, ການປະຕິບັດຕົວຈິງໃນການອອກແບບ, ການຈົດທະບຽນ, ຕະຫຼອດເຖິງ ການຄຸ້ມຄອງກວດກາຕ່າງໆໃນການຜະລິດຕາປະທັບ. ໃນການດຳເນີນການຈັດຕັ້ງປະຕິບັດວຽກງານຜະລິດຕາປະທັບທຸລະກິດຂອງບັນດາ ກອງບັນຊາການ ປກສ ແຂວງ ໃນຂອບເຂດທົ່ວປະເທດ **ຄາດວ່າໃຫ້ສຳເລັດພາຍໃນເດືອນ ກັນຍາ ປີ 2018.**

ດັ່ງນັ້ນ, ກົມຄຸ້ມຄອງສຳມະໂນຄົວ ແລະ ກໍ່ສ້າງຮາກຖານ ຈຶ່ງລາຍງານມາຍັງທ່ານ ຫົວໜ້າຫ້ອງການບໍລິການການລົງທຶນປະຕູດຽວ ກົມສົ່ງເສີມການລົງທຶນ ເພື່ອຮັບຊາບ.

**ຕາງໜ້າ ຫົວໜ້າກົມຄຸ້ມຄອງສຳມະໂນຄົວ ແລະ ກໍ່ສ້າງຮາກຖານ**

**ຮອງຫົວໜ້າກົມ**

ຊຸມພັນ ເພັດບຸນມີ

Scanned with CamScanner